# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 27 ກັນຍາ 2020 (09-27-2020)

---

## ຈົ່ງໃຫ້ກຽດຊີວິດ

*ມີທາງໃດແດ່ທີ່ທ່ານສະແດງໃຫ້ຄົນອື່ນເຫັນວ່າເຂົາມີຄ່າ?*

**ຈຸດສຳຄັນໃນບົດຮຽນ:** ຈົ່ງໂຄລົບຊີວິດມະນຸດເໝືອນດັ່ງທີ່ພຣະເຈົ້າທຳ.

**ພຣະຄັມພີຕອບສນອງຕໍ່ຊີວິດ:** ຈົ່ງຖາມຜູ້ທີ່ມີຄວາມຮູ້ໜ້ອຍໃນສິ່ງທີ່ພຣະຄັມພີສອນ, ລາວມັກຈະອ້າງພຣະບັນຍັດສິບປະການ, ໂດຍສະເພາະແມ່ນຂໍ້ທີ່ກ່ຽວກັບການຂ້າກັນ. ທ່ານອາດເຄີຍໄດ້ເຫັນລາຍການເລື່ອງພິພາກສາໃນທີວີຊຶ່ງບາງຄົນຮ້ອງດ່າອາດຊະຍາກອນວ່າ, "ເຈົ້າບໍ່ຄວນຂ້າຄົນ!" ຫຼື ບາງທີທະນາຍຝ່າຍຈຳເລີຍກໍນຳມາໃຊ້ເພື່ອປ້ອງກັນຜູ້ກະທຳຄວາມຜິດບໍ່ໃຫ້ຖືກລົງໂທດໃຫ້ເຖິງຕາຍ.

ມັນເປັນການຍອມຮັບເກືອບທົ່ວທັງຈັກວານວ່າການຂ້າຜູ້ອື່ນເປັນສິ່ງທີ່ຜິດ, ແຕ່ວັທນະທັມແລະຣັຖບານໄດ້ອອກກົດໝາຍໃນທິດທາງຕ່າງໆເພື່ອຕີຄວາມໝາຍເລື່ອງນີ້. ຊີວິດແລະຄຸນຄ່າຂອງຊີວິດ-ບໍ່ເຄີຍຖືກນຳຂຶ້ນມາຖົກຖຽງກັນເກີນກວ່າທີ່ເຄີຍມີໃນຫຼາຍປີຜ່ານມາ. ບໍ່ວ່າຈະເປັນການທຳແທ້ງ, ການເຮັດໃຫ້ຄົນປ່ອຍຕາຍຢ່າງສະບາຍ, ການຄ້າມະນຸດ, ຊີວິດຮຽກຮ້ອງໃຫ້ມີການເອົາໃຈໃສ່ແລະປ້ອງກັນຮັກສາໄວ້.

ດັ່ງທີ່ພວກເຮົາຈະໄດ້ເຫັນໃນບົດຮຽນພາກນີ້, ພຣະຄັມພີໄດ້ບອກແຈ້ງ: ຊີວິດເລີ່ມຕົ້ນຈາກເວລາປະຕິສົນທິໃນຄັນແລະມີຄ່ານັບຕັ້ງແຕ່ໃນຄັນຈົນຮອດອຸໂມງຝັງສົບ. ທຸກຊີວິດ. ໜ້າເສັຽດາຍ ຜູ້ເຊື່ອໃນພຣະກາຍຂອງພຣະຄຣິດບໍ່ຄ່ອຍຈະເຫັນພ້ອມໃນເລື່ອງນີ້ສເມີ, ແລະພວກເຮົາກໍຂາດການເປັນອັນນຶ່ງອັນດຽວໃນບ່ອນສຳຄັນນີ້. ແຕ່ພຣະເຈົ້າຢາກໃຫ້ພວກເຮົາລະນຶກສເມີວ່າ ທຸກຊີວິດມີຄ່າ. ພວກເຮົາຄວນແນມເຫັນຊີວິດເໝືອນດັ່ງພຣະອົງເຫັນ.

**ພຣະຄັມພີກ່າວວ່າແນວໃດ** : (ເບິ່ງຕາມຂໍ້ 1, 2, ແລະ3,)

### ການສຶກສາພຣະຄັມພີ

**1. <u>ອົພຍົບ20:13</u>.**

*13 ພວກເຈົ້າຢ່າຂ້າຄົນ.*

ຊີວິດຄົນມີຄ່າສູງສຳລັບພຣະເຈົ້າ-ແລະມັນຄວນຈະມີຄ່າສຳລັບພວກເຮົາ. ແຕ່ແລ້ວພວກເຮົາມັກຄິດໄປໃນທາງທີ່ຜິດ, ພຽງເພາະເຮົາບໍ່ໄດ້ລົງມືຂ້າດ້ານຮ່າງກາຍເຮົາເອງເທົ່ານັ້ນ, ພວກເຮົາຢູ່ເໜືອພຣະບັນຍັດ: "ພວກເຈົ້າຢ່າຂ້າຄົນ. "ພຣະເຢຊູໄດ້ອະທິບາຍຢ່າງແຈ່ມແຈ້ງໃນຄຳສັ່ງສອນຂອງພຣະອົງໃນບົດເທສນາເທິງຈ້າຍພູວ່າການຂ້າຄົນອາດເປັນຮູບການອື່ນໆ. ພວກເຮົາບໍ່ຄວນທຳຮ້າຍຊີວິດຜູ້ອື່ນໂດຍຄວາມກຽດຊັງຫຼືໂດຍການທຳລາຍຊື່ສຽງເໝືອນກັນ. ຄວາມກຽດຊັງແລະການທຳລາຍຊື່ສຽງກໍມີເຄົ້າມູນມາຈາກຄວາມກຽດຊັງແລະການບໍ່ໃຫ້ອະພັຍ. ເມື່ອເຮົາອະນຸຍາດໃຫ້ສອງສິ່ງນີ້ຢັ່ງຮາກໃນຊີວິດເຮົາ, ມັນຈະຜລິດກິ່ນເໝັນຂອງຄວາມຕາຍອອກມາ. ຫາກປ່ອຍປະໄວ້ ບໍ່ມີໃຜເຝົ້າດູແລ, ບໍ່ພຽງແຕ່ມັນຈະເປັນຜົນຮ້າຍແກ່ຄົນອ້ອມຂ້າງເຮົາໃນຫຼາຍທາງເທົ່ານັ້ນ ມັນຍັງສາມາດພາໃຫ້ວິນຍານແລະອາຣົມຂອງເຮົາໄປສູ່ຄວາມຕາຍອີກດ້ວຍ.

ມີທາງໃດແດ່ທີ່ສັງຄົມຂອງເຮົາບໍ່ໃຫ້ຄຸນຄ່າຂອງຊີວິດມະນຸດ?

ພຣະຄຣິດໄດ້ຮຽກເອີ້ນເຮົາໃຫ້ດຳເນີນຊີວິດດ້ວຍຄວາມຮັກ. ເວລາທ່ານແລະຂ້າພະເຈົ້າໃຊ້ຊີວິດໂດຍປາສຈາກຄວາມຮັກພຣະເຈົ້າແລະ ຮັກກັນ, ພວກເຮົາກໍດຳເນີນຊີວິດບໍ່ຟັງຄຳບັນຊາຂອງພຣະເຈົ້າທີ່ວ່າ: ຈົ່ງຮັກ. ແລ້ວ, ຄວາມຮັກກໍຈະກັບຍາກທີ່ຈະຮັບກິ່ນເໝັນຂອງການບໍ່ໃຫ້ອະພັຍ. ຄຳເວົ້າທີ່ເອັນດູສົງສານກໍຈະກັບກາຍເປັນຄຳຕິສິນນິນທາອັນຂົມຂື່ນ. ທ່າທີຂອງການໃຫ້ກໍຈະເລີ່ມຜູກພັນກັບຜົນຕອບແທນ. ຊາກຄວາມເຊື່ອມໂຊມຂອງຄວາມກິນແໜງ, ລະອາຍ, ໂກດຮ້າຍ, ແລະຄວາມສົງສັຍຈະຖ້ວມລົ້ນເວຫາສ້າງຄວາມຫຍຸ້ງຍາກໃນຄວາມສັມພັນ, ວຽກງານ, ການຮັບໃຊ້, ແລະໃນຊີກອື່ນໆຂອງຊີວິດແທ້ຈິງ. ດ້ວຍເຫດນີ້ການສແວງຫາການໃຫ້ອະພັຍຜູ້ທີ່ເຮັດໃຫ້ທ່ານເຈັບປວດ, ຫຼືແມ້ກະທັ້ງການໃຫ້ອະພັຍຕົວທ່ານເອງໃນສິ່ງທີ່ທ່ານກຳລັງກິນແໜງຢູ່ດຽວນີ້. ມັນກ່ຽວກັບການໄດ້ຮັບຊີວິດທີ່ພຣະເຈົ້າປະສົງໃຫ້ທ່ານມີນັ້ນກັບຄືນມາ. ຊີວິດມະນຸດທຸກຊີວິດມີຄ່າ-ລວມທັງຊີວິດຂອງທ່ານ. ເວລາທ່ານເລືອກທີ່ຈະຢູ່ຢ່າງຂົມຂື່ນ, ທ່ານກໍທຳລາຍຕົວເອງເຊັ່ນດຽວກັນ. ດັ່ງທີ່ໄດ້ກ່າວມາແລ້ວ, ຄວາມຂົມຂື່ນແມ່ນນ້ຳກົດສາດໃສ່ຜູ້ອື່ນ, ແຕ່ແລ້ວມັນກັບກັດກິນຊີວິດທ່ານເອງ.

ພວກເຮົາຊາບດີແລ້ວວ່າ ຄົນໂກດຮ້າຍກຳລັງນຳພັຍມາສູ່ຕົວເອງ. ເຂົາໂກດຮ້າຍເພາະຄວາມກຽດຊັງແລະຄວາມຂົມຂື່ນກຳລັງກັດກິນວິນຍານຂອງເຂົາ, ຊຶ່ງທຳລາຍຄວາມອ່ອນນ້ອມຂອງເຂົາ. ຈຸດນີ້ກັບຄືນມາຫາຄຳເວົ້າຂອງພຣະເຢຊູທີ່ເວົ້າເຖິງການຂ້າຄົນ. ຄວາມກຽດຊັງຂອງເຮົາແມ່ນຮູບແບບຂອງການຂ້າຜູ້ອື່ນ, ແຕ່ກັບທຳລາຍເຮົາເອງຢ່າງຮ້າຍແຮງ. ເພື່ອລະຖິ້ມຄວາມກຽດຊັງແລະຄວາມຂົມຂື່ນ, ຈົ່ງເບິ່ງກາງແຂນ ແລະສິ່ງທີ່ພຣະເຢຊູໄດ້ຊົງກະທຳ ເພື່ອທ່ານ. ພວກເຮົາເທົ່າທຽມກັນທີ່ໄມ້ກາງແຂນ. ພຣະເຢຊູຕາຍເພື່ອໃຫ້ອະພັຍທ່ານ, ແລະພຣະອົງໄດ້ຕາຍເພື່ອໃຫ້ອະພັຍຜູ້ທີ່ທ່ານພະຍາຍາມຂ້າດ້ວຍຄວາມຂົມຂື່ນນັ້ນເຊັ່ນກັນ.

| |
|---|
| ແມ່ນຫຍັງຄືຜົນປໂຍດບາງຢ່າງສຳລັບສັງຄົມເມື່ອພວກເຮົາໃຫ້ຄຸນຄ່າຂອງຊີວິດ? |

**2. <u>1ຊາມູເອນ26:7-11</u>.**

*[7]ສະນັ້ນ ດາວິດກັບອາບີໄຊຈຶ່ງເຂົ້າໄປໃນຄ້າຍ ຂອງກະສັດຊາອູນໃນຄືນນັ້ນ ແລະ ພົບວ່າເພິ່ນກຳລັງນອນຢູ່ກາງ
ຄ້າຍໂດຍມີຫອກສຽບໄວ້ກັບພື້ນດິນໃກ້ຫົວຂອງເພິ່ນ, ສ່ວນອັບເນແລະທະຫານກໍນອນອ້ອມເພິ່ນຢູ່. [8]ອາບີໄຊຈຶ່ງ
ເວົ້າກັບດາວິດວ່າ “ຄືນມື້ນີ້ ພຣະເຈົ້າໄດ້ມອບສັດຕູຂອງທ່ານໄວ້ໃນກຳມືຂອງທ່ານແລ້ວ. ບັດນີ້ຂໍໃຫ້ຜູ້ຂ້າເອົາຫອກ
ຂອງເພິ່ນແທງເພິ່ນໃຫ້ຊອດຄາພື້ນດິນສາ, ແທງເທື່ອດຽວເທົ່ານັ້ນແຫຼະ ບໍ່ຈຳເປັນແທງຮອດສອງເທື່ອດອກ.” [8]ແຕ່ດາ
ວິດຫ້າມໄວ້ວ່າ “ເຈົ້າບໍ່ຄວນທຳຮ້າຍເພິ່ນເລີຍ! ເພາະຜູ້ໃດກໍຕາມ ທີ່ທຳຮ້າຍກະສັດທີ່ພຣະຜູ້ເປັນເຈົ້າໄດ້ເລືອກເອົາ,
ພຣະອົງຈະລົງໂທດຜູ້ນັ້ນຢ່າງແນ່ນອນ.” [10]ໃນນາມຂອງພຣະຜູ້ເປັນເຈົ້າຜູ້ຊົງມີຊີວິດຢູ່.” ດາວິດເວົ້າຕໍ່ “ຂ້ອຍຮູ້ວ່າ
ພຣະອົງເອງຈະເປັນຜູ້ຂ້າກະສັດຊາອູນ; ເມື່ອເວລາມາເຖິງເພິ່ນອາດຕາຍຢ່າງທັມມະດາ ຫຼື ຕາຍໃນສນາມຮົບກໍໄດ້.
[11]ພຣະຜູ້ເປັນເຈົ້າຫ້າມຂ້ອຍໄວ້ວ່າ ຂ້ອຍບໍ່ຄວນທຳຮ້າຍຜູ້ທີ່ພຣະອົງໄດ້ແຕ່ງຕັ້ງໄວ້ໃຫ້ເປັນກະສັດ! ໝູ່ເຮົາເອົາແຕ່ໄຫ
ນ້ຳກັບຫອກຂອງເພິ່ນໄປກໍພໍ.”*

| |
|---|
| ***ຄຳເວົ້າແລະການກະທຳຂອງດາວິດເປີດເຜີຍຄວາມສັມພັນຣະຫວ່າງເພິ່ນກັບພຣະເຈົ້າຢ່າງໃດ?*** |

ເຖິງແມ່ນຊາອູນກຳລັງເປັນກະສັດກໍຕາມ, ເປັນທີ່ປາກົດແຈ້ງແລ້ວວ່າພຣະຫັດພຣະເຈົ້າຢູ່ກັບດາວິດແລະເພິ່ນຈະໄດ້ເປັນກະສັດ. ກະສັດຊາອູນບໍ່ພຽງແຕ່ຂັດຂວາງສິດການຂຶ້ນສູ່ບັນລັງຂອງດາວິດເທົ່ານັ້ນ, ແຕ່ເພິ່ນໄດ້ກະທຳທຸກສິ່ງເພື່ອບໍ່ໃຫ້ດາວິດໄດ້ເປັນກະສັດ. ໃນຄືນນີ້ຂນະທີ່ຊາອູນແລະທະຫານຂອງເພິ່ນນອນຫຼັບຢູ່, ດາວິດໄດ້ເຂົ້າໄປໃກ້. ສະຖານະການໄດ້ອຳນວຍໃຫ້ດາວິດແລ້ວ; ທີ່ນີ້ເປັນໂອກາດຂ້າຊາອູນໄດ້ຢ່າງງ່າຍດາຍຖ້າເພິ່ນຢາກຂ້າ. ອີງຕາມການກະທຳຂອງຊາອູນຕໍ່ດາວິດ, ຫຼາຍຄົນກໍຈະບໍ່ທຳຮ້າຍດາວິດດອກຖ້າເພິ່ນເອົາຊີວິດຊາອູນ. ອາດຈະພົບວ່າເປັນ

ສະຖານະການສົງຄາມຫຼືເປັນການປ້ອງກັນຕົວ: "ຈະຂ້າຫຼືຈະຖືກຂ້າ."

ແຕ່ດາວິດຊາບດີກວ່າ. ດາວິດຮູ້ວ່າ *"ຜູ້ໃດກໍຕາມທີ່ທຳຮ້າຍກະສັດທີ່ພຣະຜູ້ເປັນເຈົ້າໄດ້ເລືອກເອົາ, ພຣະອົງຈະລົງໂທດຜູ້ນັ້ນຢ່າງແນ່ນອນ,"* ສະນັ້ນ ດາວິດເລືອກເອົາແຕ່ໄຫນໍ້າກັບຫອກໄປ ແທນທີ່ຈະເອົາຫົວ ເພື່ອໃຫ້ຊາອູນຮູ້ວ່າເພິ່ນຈະຂ້າກໍໄດ້ຢ່າງງ່າຍດາຍ.

ການເລືອກໃຫ້ກຽດຊີວິດຂອງດາວິດສະແດງໃຫ້ເຫັນຄວາມຈິງໃນໃຈຂອງເພິ່ນຢ່າງຈະແຈ້ງ. ຊີວິດສັກສິດ. ບໍ່ມີໃຜມີສິດເອົາຊີວິດຜູ້ອື່ນນອກຈາກພຣະຜູ້ສ້າງຊີວິດເອງຄື: ພຣະເຈົ້າ. ເຫດຜົນວ່າເຫດໃດຈຶ່ງບໍ່ມີໃຜສາມາດເອົາຊີວິດຄົນອື່ນ ເພາະວ່າພວກເຮົາແຕ່ລະຄົນຖືກເນຣະມິດສ້າງຕາມສາຍາຂອງພຣະເຈົ້າ.

ພຣະເຈົ້າໄດ້ກ່າວຖ້ອຍຄຳພິເສດຕໍ່ໂນອາ, ຊຶ່ງຊ່ອຍບອກເຖິງຮາກຖານຄວາມສັກສິດຂອງຊີວິດວ່າ:"ຜູ້ໃດຂ້າເພື່ອນສັນໃດຜູ້ນັ້ນຈະຖືກເພື່ອນຂ້າສັນນັ້ນ ເພາະວ່າພຣະເຈົ້າຊົງສ້າງມະນຸດຕາມຮູບຮ່າງຂອງພຣະອົງ" (ປະຖົມການ9:6). ການເຈຕນາເຮັດໃຫ້ເລືອດຫຼັ່ງແມ່ນການຂ້າຄົນ. ເຫດຜົນການບໍ່ອະນຸຍາດໃຫ້ຂ້າຄົນເພາະເປັນຄວາມຜິດບໍ່ພຽງແຕ່ເປັນການຕໍ່ສູ້ຄົນອື່ນເທົ່ານັ້ນ; ແຕ່ມັນເປັນການຕໍ່ສູ້ພຣະເຈົ້າຕ່າງຫາກ. ການຂ້າຕໍ່ສູ້ພຣະເຈົ້າດ້ວຍວ່າມະນຸດໄດ້ຖືກສ້າງຕາມຮູບຮ່າງຂອງພຣະເຈົ້າ. ການທຳລາຍມະນຸດເປັນການປະກາດສົງຄາມກັບພຣະເຈົ້າ. ທຸກຊີວິດຢູ່ໃນພຣະຫັດຂອງພຣະເຈົ້າ. ອົງພຣະຜູ້ເປັນເຈົ້າບົ່ງບອກວ່າຜູ້ໃດຈະຢູ່ຫຼືຈະຕາຍ. ຕັດສິນວ່າຜູ້ໃດຈະຢູ່ຫຼືຈະຕາຍ ເປັນການສວມບົດບາດຊຶ່ງພຣະເຈົ້າເທົ່ານັ້ນທີ່ມີສິດທຳໄດ້. ພວກເຮົາບໍ່ໄດ້ເນຣະມິດຊີວິດ, ແລະພວກເຮົາບໍ່ສາມາດເອົາຊີວິດຜູ້ໃດ.

ການປະຕິເສດຂອງດາວິດໃນການເອົາຊີວິດຊາອູນເພາະເພິ່ນຮູ້ວ່າພຣະເຈົ້າເທົ່ານັ້ນທີ່ມີສິດພິເສດເໜືອຊີວິດແລະຄວາມຕາຍ. ເພິ່ນປະບັນຫາໄວ້ໃນພຣະຫັດພຣະເຈົ້າ. *[10]ໃນນາມຂອງພຣະຜູ້ເປັນເຈົ້າຜູ້ຊົງມີຊີວິດຢູ່." ດາວິດເວົ້າຕໍ່ "ຂ້ອຍຮູ້ວ່າພຣະອົງເອງຈະເປັນຜູ້ຂ້າກະສັດຊາອູນ; ເມື່ອເວລາມາເຖິງເພິ່ນອາດຕາຍຢ່າງທັມມະດາຫຼືຕາຍໃນສນາມຣົບກໍໄດ້. [11]ພຣະຜູ້ເປັນເຈົ້າຫ້າມຂ້ອຍໄວ້ວ່າຂ້ອຍບໍ່ຄວນທຳຮ້າຍຜູ້ທີ່ພຣະອົງໄດ້ແຕ່ງຕັ້ງໄວ້ໃຫ້ເປັນກະສັດ! ພູ່ເຮົາເອົາແຕ່ໄຫນໍ້າກັບຫອກຂອງເພິ່ນໄປກໍພໍ" (ຂໍ້11-12).*

ໃນຖານະເປັນສາວົກຂອງອານາຈັກສວັນ, ພວກເຮົາບໍ່ຄວນເຕີບໃຫ່ຍຂຶ້ນເຮັດຕາມອຳເພີໃຈຕົນເອງໃນໂລກທີ່ຊີວິດບໍ່ມີຄຸນຄ່າຕໍ່ໄປ. ພວກເຮົາຖືກຮຽກເອີ້ນໃຫ້ສົ່ງສຽງເພື່ອຊີວິດຂອງຄົນອື່ນ-ໃນທາງໃດທາງນຶ່ງແລະທຸກທາງທີ່ເຮົາສາມາດເວົ້າໄດ້.

**3.1 ຊາມູເອນ 26:22-25.**

*[22]ດາວິດຕອບຄືນວ່າ "ພຣະຣາຊາເຈົ້າຂ້າ ນີ້ເດຫອກຂອງທ່ານ! ໃຫ້ທະຫານຂອງທ່ານຜູ້ນຶ່ງມາເອົາໄປເຖີດ. [23]ພຣະຜູ້ເປັນເຈົ້າຈະໃຫ້ບຳເໜັດຜູ້ທີ່ສັດຊື່ແລະທ່ຽງທັມ, ມື້ນີ້ພຣະອົງມອບທ່ານໄວ້ໃນກຳມືຂອງຜູ້ຂ້າແລ້ວ; ແຕ່ຜູ້ຂ້າບໍ່ໄດ້ທຳຮ້າຍທ່ານ, ຜູ້ທີ່ພຣະຜູ້ເປັນເຈົ້າໄດ້ແຕ່ງຕັ້ງໃຫ້ເປັນກະສັດ. [24]ດັ່ງດຽວກັບທີ່ຜູ້ຂ້າໄດ້ໄວ້ຊີວິດຂອງທ່ານແລ້ວໃນມື້ນີ້, ຂໍພຣະຜູ້ເປັນເຈົ້າກະທຳຕໍ່ຜູ້ຂ້າເຊັ່ນດຽວກັນເຖີດ; ແລະຂໍໃຫ້ຜູ້ຂ້າພົ້ນຈາກຄວາມເດືອດຮ້ອນທຸກຢ່າງສາ." [25]ກະສັດຊາອູນກ່າວແກ່ດາວິດວ່າ "ລູກຊາຍຂອງພໍ່ເອີຍຂໍໃຫ້ພຣະຜູ້ເປັນເຈົ້າອວຍພອນເຈົ້າເຖີດ! ເຈົ້າຈະປະສົບຜົນສຳເຣັດໃນທຸກສິ່ງທີ່ເຈົ້າກະທຳ." ແລ້ວດາວິດກໍຈາກໄປຕາມທາງຂອງຕົນ. ສ່ວນກະສັດຊາອູນກໍກັບເມືອວັງຂອງຕົນ.*

ທຸກໆຊີວິດມີຕາປະທັບຂອງພຣະເຈົ້າ. ຍອມຮັບວ່າ ພວກເຮົາໄດ້ທຳລາຍຮູບພາບນັ້ນໂດຍຄວາມບາບຂອງເຮົາແລ້ວ, ແຕ່ຮູບຮ່າງຂອງພຣະອົງໄດ້ຖືກປະທັບຕາລົງໃສ່ຊີວິດເຮົາແຕ່ລະຄົນແລ້ວ. ຄວາມຈິງນີ້ໄດ້ໃຫ້ຄຸນຄ່າແກ່ຊີວິດ. ຄວາມຈິງນີ້ບໍ່ໄດ້ບັງຄັບໃຊ້ພຽງແຕ່ໃຫ້ມອງເຮົາແລະປະຕິບັດຕໍ່ເຮົາເອງເທົ່ານັ້ນ ແຕ່ໃຫ້ມອງແລະປະຕິບັດຕໍ່ຄົນອື່ນດ້ວຍ. ພວກເຮົາຕ້ອງນັບຖືຊີວິດໂດຍການປະຕິບັດຕໍ່ທຸກຊີວິດໃຫ້ມີຄ່າເທົ່າທຽມກັນ. ດາວິດໄດ້ເຮັດເປັນແບບຢ່າງໃນການປະຕິບັດຕໍ່ຊາອູນ.

ຊາອູນມີໃຈຜັນແປງ່າຍ. ເພິ່ນເອີ້ນດາວິດວ່າລູກແລະບອກວ່າ *ເຈົ້າຈະປະສົບຜົນສຳເລັດໃນທຸກສິ່ງທີ່ເຈົ້າກະທຳ.* ຕາມຄວາມຈິງແລ້ວ ການປະຕິເສດທີ່ຈະຂ້າຊາອູນ ກໍເພື່ອຫາໂອກາດຊັກນຳຊາອູນໃຫ້ກັບວັງແລະຢຸດໄລ່ລ່າ, ຢ່າງໜ້ອຍກໍເພື່ອໃຫ້ເວລາມີຊີວິດຢູ່. ດາວິດໄດ້ສຳແດງການປະພຶດທີ່ໃຫ້ຄຸນຄ່າຊີວິດ. ຕລອດຊີວິດຂອງເພິ່ນ ດາວິດໄດ້ເອົາຕົວຢ່າງຜູ້ທຳນວາຍມີກາຊຶ່ງຈະນຳມາກ່າວໃນສະຕະວັດພາຍພາກໜ້າວ່າ: *"ມະນຸດເອີຍ ພຣະຜູ້ເປັນເຈົ້າໄດ້ບອກພວກເຈົ້າແລ້ວວ່າແມ່ນຫຍັງດີ ສິ່ງທີ່ພຣະອົງປະສົງຈາກເຈົ້າກໍຄື ໃຫ້ກະທຳຄວາມຍຸຕິທັມ ສະແດງຄວາມຮັກອັນໝັ້ນຄົງ ແລະເຊື່ອຟັງພຣະເຈົ້າຂອງເຈົ້າຢ່າງອ່ອນນ້ອມ" (ມີກາ6:8).*

ຈົ່ງພິຈາຣະນາວ່າພວກເຮົາຈະດຳເນີນຊີວິດຕາມຄວາມຈິງນີ້ວ່າເຮົາຈະໃຫ້ກຽດຊີວິດຢ່າງໃດ:

- ໃຫ້ກະທຳຄວາມຍຸຕິທັມລວມທັງ ການກະທຳທີ່ຈະສ້າງຄວາມເຈັບປວດ, ຊອກຫາທາງປ້ອງກັນຊີວິດເຂົາ.
- ສະແດງຄວາມຮັກໝັ້ນຄົງ ປະກອບດ້ວຍຄວາມໝັ້ນຄົງແລະຄວາມສັດຊື່ສແວງຫາຊີວິດແລະອິສຣະພາບໃຫ້ແກ່ຜູ້ທີ່ສ່ຽງຕໍ່ການສູນເສັຽທັງສອງຢ່າງນີ້.
- ດຳເນີນຊີວິດດ້ວຍຄວາມອ່ອນນ້ອມໝາຍເຖິງພວກເຮົາຖືວ່າຄົນອື່ນສຳຄັນກວ່າເຮົາເອງ.

ເມື່ອເຮົາເຮັດສາມສິ່ງນີ້, ພວກເຮົາໃຫ້ກຽດແລະຄຸນຄ່າຊີວິດທັງສອງຢ່າງຕາມທີ່ພຣະເຈົ້າຕັ້ງໃຈເອົາໄວ້. ພວກເຮົາເລັງໃສ່ພຣະພອນແລະບຳເນັດຊຶ່ງມາຈາກການກະທຳ, ດັ່ງພວກເຮົາເປັນພະຍານເຖິງສະຖານະການຂອງດາວິດເອງກັບຊາອູນ.

| |
|---|
| ມີການກະທຳໃນທາງໃດແດ່ທີ່ພວກເຮົາສາມາດຍົກຄຸນຄ່າຂອງຊີວິດຕໍ່ໜ້າຄົນອື່ນ? |

## ນຳໃຊ້ໃນຊີວິດ

ທ່ານຈະຊອກຫາທາງສແດງໃຫ້ເຫັນຄຸນຄ່າແກ່ທຸກຊີວິດຢ່າງໃດ? ຈົ່ງເລືອກການນຳໃຊ້ນຶ່ງຕໍ່ລົງໄປນີ້:

- ***ກວດກາອຸປນິສັຍຂອງທ່ານ.*** ຖ້າທ່ານເຫັນວ່າຜູ້ໃດຜູ້ນຶ່ງສຳຄັນກວ່າຄົນອື່ນໆ, ຈົ່ງສາຣະພາບຕໍ່ພຣະເຈົ້າແລະກັບໃຈເສັຽໃໝ່. ໃນຍາມໂລກຖືວ່າຄົນໄຮ້ຄ່າຕ່ຳຕ້ອຍ, ແລະບໍ່ສຳຄັນ, ພວກເຮົາຖືກຮຽກເອີ້ນໃຫ້ເຫັນທຸກຄົນດັ່ງທີ່ພຣະເຈົ້າເຫັນເຂົາ.
- ***ກວດກາຄຳເວົ້າຂອງທ່ານ.*** ກວດກາການກ່ຽວຂ້ອງຂອງທ່ານໃນການຖືຄ່າຊີວິດຕ່ຳດ້ວຍຄຳເວົ້າທີ່ທ່ານເວົ້າໃຫ້ຄົນອື່ນຫຼືເວົ້າກ່ຽວກັບຄົນອື່ນ. ຄຳເວົ້າຮ້າຍ, ເຈຕນາຮ້າຍ, ຄຽດຂົມ, ແມ້ກະທັ້ງການເມີນເສີຍບໍ່ໃຫ້ກຽດຊີວິດຜູ້ທີ່ພຣະເຈົ້າຮັກ, ສະນັ້ນ ຈົ່ງກັບໃຈ ແລະຕັດສິນໃຈເວົ້າແຕ່ຄຳຍົກຍໍກັນ.
- ***ກວດກາການກະທຳຂອງທ່ານ.*** ຈົ່ງຫາທາງທີ່ເປັນຮູບພຣະທັມທີ່ທ່ານສາມາດຮັບປະກັນຄ່າຂອງຊີວິດໃນຂົງເຂດອິດທິພົນຂອງທ່ານ. ການລົງມືທຳອາດລວມດ້ວຍການໃຫ້ຄຳແນະນຳທີ່ສູນດູແລຄົນຖືພາ, ການຊ່ອຍເຫຼືອພໍ່ແມ່ທີ່ມີລູກພິການ, ຫຼືນຳຄວາມຍິນດີໄປໃຫ້ຜູ້ທີ່ຖືກປ່ອຍປະຢູ່ເຮືອນດູແລຜູ້ເຖົ້າ (Nursing home).

ທຸກຊີວິດມີຄ່າ. ມັນຂຶ້ນຢູ່ກັບເຮົາແຕ່ລະຄົນວ່າຈະໃຫ້ຄຸນຄ່າຫຼືຍົກສູງຄ່ານີ້ໃນສິ່ງທີ່ເຮົາຄິດ, ເວົ້າ, ແລະ ເຮັດ. ນີ້ມັນຮຽກຮ້ອງໃຫ້ເຮົາອອກຈາກເຂດຄວາມສະດວກສະບາຍຂອງເຮົາແລະເປັນຄົນເອົາຈິງໃນການຍົກຄຸນຄ່າຂອງຊີວິດຂຶ້ນຕື່ມ-ຕາມທີ່ພຣະເຈົ້າໄດ້ສັ່ງໄວ້.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI**